USAID
FROM THE AMERICAN PEOPLE

RECOFTC
THE CENTER FOR PEOPLE AND FORESTS

# The Grassroots Equity Newsletter

ເຮັດວຽກກັບປະຊາຊົນທ້ອງຖິ່ນຢູ່ໃນພາກພື້ນແມ່ນ້ຳຂອງເພື່ອສົ່ງເສີມຂະບວນການກ່ຽວກັບຄວາມທ່ຽງທຳໃນການຫລຸດຜ່ອນການປ່ຽນແປງດິນຟ້າອາກາດ



• ສະບັບທີ 5 • ກໍລະກົດ 2015

## ກ່ຽວກັບແຜນງານ GREEN Mekong

ວາລະສານສະບັບນີ້ໄດ້ຮັບການຂຽນຂື້ນໂດຍແຜນງານການສ້າງໂອກາດ ແລະ ເຄື່ອຄາຍທີ່ເຂັ້ມແຂງ ຢູ່ຂັ້ນຮາກຖານໃນເຂດແມ່ນ້ຳຂອງ (GREEN Mekong), ທີ່ໄດ້ຮັບການສະໜັບສະໜູນດ້ານທຶນຮອນ ຈາກອົງການຊ່ວຍເຫລືອເພື່ອການພັດທະນາສາກົນຂອງສະຫະລັດອາເມລິກາ (USAID), ຊຶ່ງແນໃສ່ປັບປຸງ ຄວາມອາດສາມາດຂອງຜູ້ວາງນະໂຍບາຍ ແລະ ຜູ້ທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານໃນເຂດລຸ່ມແມ່ນ້ຳຂອງ ເພື່ອສົ່ງເສີມຄວາມທ່ຽງທຳ ດ້ານນະໂຍບາຍ ແລະ ພາກປະຕິບັດໃນການຫລຸດຜ່ອນ ການປ່ຽນແປງດິນຟ້າອາກາດອາກາດທີ່ເກີດຈາກປ່າໄມ້.

ແຜນງານແມ່ນອີງໃສ່ຄວາມເປັນຈິງທີ່ວ່າຄົນທ້ອງຖິ່ນມີຄວາມຕ້ອງການ, ມີຄວາມຫວັງ, ມີຄວາມຮູ້ ແລະ ມີສ່ວນຮ່ວມ ແມ່ນມີຄວາມສຳຄັນໃນຂະບວນການຕັດສິນບັນຫາທີ່ພົວພັນກັບການປົກຄອງ ແລະ ການຄຸ້ມຄອງປ່າໄມ້. ຢູ່ໃນເຂດລຸ່ມແມ່ນ້ຳຂອງ, ບ່ອນທີ່ປະຊາຊົນນັບເປັນລ້ານໆຄົນຍັງຄົງອາໄສປ່າໄມ້ຢ່າງຫລວງຫລາຍຢູ່, ບັນດານະໂຍບາຍ ແລະ ຍຸດທະສາດທີ່ວາງອອກເພື່ອປ້ອງກັນປ່າໄມ້, ຫລຸດຜ່ອນການປ່ອຍທາດອາຍກາກບອນ ແລະ ຫລຸດຜ່ອນການປ່ຽນແປງດິນຟ້າອາກາດ ຈະປະສົບຜົນສຳເລັດໄດ້ກໍຕໍ່ເມື່ອມີການເຂົ້າຮ່ວມຢ່າງຕັ້ງໜ້າຂອງຊຸມຊົນທ້ອງຖິ່ນເທົ່ານັ້ນ.

ແຜນງານ GREEN Mekong ໄດ້ຮັບການຊ່ວຍເຫລືອດ້ານທຶນຮອນຈາກອົງການຊ່ວຍເຫລືອເພື່ອການພັດທະນາສາກົນຂອງສະຫະລັດອາເມລິກາ (USAID) ໃນບ້ວງຂອງການພັດທະນາລະດັບພາກພື້ນ ສຳລັບອາຊີ(RDMA) ແລະ ຖືກຈັດຕັ້ງປະຕິບັດໂດຍສູນ ຣີຄອບ(RECOFTC), ສູນສຳລັບປະຊາຊົນ ແລະ ປ່າໄມ້.

## ຍິນດີຕ້ອນຮັບ ເຂົ້າສູ່ວາລະສານດ້ານຄວາມທ່ຽງທຳຢູ່ຂັ້ນຮາກຖານ

### ຢູ່ໃນເຫລັ້ມນີ້


- ກຸ່ມການຮຽນຮູ້ລະດັບພາກພື້ນ: ແນວທາງປະຕິບັດໜຶ່ງທີ່ມີຜົນກະທົບ
- ການກວດເບິ່ງຢ່າງໃກ້ສິດກັບກຸ່ມການຮຽນຮູ້ລະດັບພາກພື້ນ
- ບັນດາຕົວແທນຈາກອົງການຈັດຕັ້ງພາກສັງຄົມໄດ້ປະຊຸມກັນທີ່ບາງກອກ ເພື່ອຝຶກຝົນທັກສະຂອງຕົນ ໃນການອຳນວຍຄວາມສະດວກ
- ຂໍ້ມູນຫລ້າສຸດຈາກກອງທຶນທ້າທາຍ GREEN Mekong
- ຊັບພະກອນດ້ານຄວາມທ່ຽງທຳ
- ແຫວ່ນສ່ອງດ້ານບົດບາດຍິງຊາຍ








# ກຸ່ມການຮຽນຮູ້ລະດັບພາກພື້ນ: ແນວທາງປະຕິບັດໜຶ່ງທີ່ມີຜົນກະທົບ

“ຂ້ອຍຄິດບໍ່ອອກເລີຍທີ່ລາວບໍ່ມີປ່າໄມ້. ໃນແຕ່ລະມື້, ຂ້ອຍເຫັນຊຸມຊົນປ່າໄມ້ແມ່ນອາໄສມັນເພື່ອລ້ຽງຄອບຄົວຂອງເຂົາເຈົ້າ ແລະ ຄໍ້າຊູຊີວິດການເປັນຢູ່ຂອງເຂົາເຈົ້າ. ໝົດທັງປະເທດ - ນັບທັງພາກພື້ນ - ແມ່ນໄດ້ຮັບຜົນປະໂຫຍດ ແລະອາໄສຕໍ່ສຸຂະພາບອັນຍາວນານຂອງມັນ. ສິ່ງນີ້ແມ່ນການບັນລະຍາຍຂອງທ່ານ ບຸນຈັນ ລັດຕະນະວົງກົດ, ຮອງຫົວໜ້າຂະແໜງປ່າໄມ້ແຂວງຫລວງພະບາງ ສປປ ລາວ, ກ່ຽວກັບຄວາມສຳຄັນໃນການປ້ອງກັນປ່າໄມ້ຢູ່ໃນພາກພື້ນແມ່ນ້ຳຂອງ, ແລະ ລາວກໍເວົ້າຖືກແລ້ວ. ຖ້າບໍ່ມີປ່າໄມ້, ປະຊາຊົນຫລາຍລ້ານຄົນກໍໝົດການເຂົ້າເຖິງແຫລ່ງອາຫານ ແລະຕ່ອງໄຊ້ທຳມະຊາດກໍຈະແຕກຫັກລົງ.



ວິທະຍາກອນນຳສະເໜີບັນຫາດ້ານຄວາມທ່ຽງທຳຢູ່ຮາກຖານຕໍ່ສະມາຊິກຂອງກຸ່ມຮຽນຮູ້ພາກພື້ນທີ່ ຊຽມຮຽບ, ກຳປູເຈຍ

ກຸນແຈໃນການຮັກສາປ່າໄມ້ເຫລົ່ານີ້ໄວ້ແມ່ນຊຸມຊົນທີ່ອາໄສຢູ່ໃນ ແລະໃກ້ຄຽງພວກມັນ. ປະຊາຊົນເຫລົ່ານີ້ຮູ້ຈັກພວກມັນດີທີ່ສຸດ, ແຕ່ພວກເຂົາເຈົ້າບໍ່ຄ່ອຍຈະໄດ້ເຂົ້າຮ່ວມໃນຂະບວນການຕັດສິນບັນຫາ, ປ່ອຍໃຫ້ເຂົາເຈົ້າຕົກຢູ່ໃນຄວາມສ່ຽງທີ່ຈະຖືກຖືກກະທົບ ຈາກນະໂຍບາຍ ແລະການປະຕິບັດທີ່ບໍ່ຍຸຕິທຳໃນການຄຸ້ມຄອງຈັດສັນປ່າໄມ້. ການຮັບຮູ້ພຽງແຕ່ເທົ່ານີ້ແມ່ນຍັງບໍ່ພຽງພໍເພື່ອຈະປ້ອງກັນປ່າໄມ້ ແລະປະຊາຊົນທີ່ອາໄສມັນ. ລັດຖະບານຈຳເປັນຕ້ອງໄດ້ເອົາຊຸມຊົນທ້ອງຖິ່ນເຂົ້າມາຮ່ວມ.

ຜ່ານຂະບວນການຈັດກອງປະຊຸມຮຽນຮູ້ໂດຍມີບັນດາຜູ້ເຂົ້າຮ່ວມພວກເກົ່າ, ກຸ່ມຮຽນຮູ້ລະດັບພາກພື້ນໄດ້ຮັບປະກັນຕອບສະໜອງຕໍ່ບັນຫາຕົວຈິງທີ່ໄດ້ຈຳແນກອອກໂດຍ ສະມາຊິກຂອງກຸ່ມຮຽນຮູ້ຜ່ານການຝຶກອົບຮົມ. ທ່ານ ລັດຕະນະວງກົດ ໄດ້ຜ່ານປະສົບການດ້ານການຮຽນຮູ້ຕົວຈິງດ້ວຍຕົນເອງ: “ຈາກການທີ່ໄດ້ເຂົ້າຮ່ວມໃນການຝຶກອົບຮົມເຫລົ່ານີ້, ພວກເຮົາໄດ້ຮຽນຮູ້ໃນການເວົ້າກັບຊຸມຊົນ; ຫລັງຈາກທີ່ກັບມາປະເທດຂອງຕົນເອງ, ກໍໄດ້ພົບກັບປະຊາຊົນ ແລະໄດ້ເກັບກຳຂໍ້ມູນຕົວຈິງກ່ຽວກັບບັນຫາທີ່ສຳຄັນຕໍ່ເຂົາເຈົ້າ. ແຕ່ພວກເຮົາບໍ່ໄດ້ພົບກັບປະຊາຊົນເທົ່ານັ້ນ, ແຕ່ພວກເຮົາເຂົ້າໃຈວ່າຈະໃຫ້ມີຄວາມທ່ຽງທຳແນວໃດໃນແນວທາງປະຕິບັດຂອງພວກເຮົາ, ເຂົ້າເຖິງແມ່ຍິງ ແລະສະມາຊິກຂອງຊຸມຊົນຜູ້ອື່ນໆທີ່ມີສຽງນ້ອຍກວ່າ”.

ຈຸດໝາຍຂອງກຸ່ມຮຽນຮູ້ແມ່ນເພື່ອຍົກໃຫ້ເຫັນຄວາມສຳຄັນຂອງຄວາມທ່ຽງທຳໃນຂະບວນການຕັດສິນບັນຫາ, ແຕ່ຈຸດເລີ້ມຕົ້ນໄປຮອດຈຸດສຸດທ້າຍ, ແລະການຝຶກອົບຮົມເພີ້ມເຕີມກໍເຮັດໃຫ້ມັນເກີດຂື້ນໄດ້. ໝາກຜົນແມ່ນການຫັນປ່ຽນທີ່ສຳຄັນທາງດ້ານທັດສະນະຕໍ່ກັບການຄຸ້ມຄອງບໍລິຫານປ່າໄມ້ ແລະການວາງນະໂຍບາຍຢູ່ຂັ້ນແຂວງ. ພະນັກງານປ່າໄມ້ມາບັດນີ້ແມ່ນໄດ້ເຂົ້າໃຈດີຂຶ້ນວ່າຈະເອົາສະມາຊິກຂອງຊຸມຊົນເຂົ້າຮ່ວມ ແລະປະສານສົມທົບກັບເຂົາເຈົ້າແນວໃດ, ເຮັດໃຫ້ການມີສ່ວນຮ່ວມຂອງເຂົາເຈົ້າມີຜົນຫລາຍຂຶ້ນແລະການປ້ອງກັນປ່າໄມ້ເປັນຈຸດປະສົງຮ່ວມທີ່ສຳຄັນຂອງໝົດທຸກຄົນ.

ຄຳເຫັນຂອງ ທ່ານ ລັດຕະນະວົງກົດ ໄດ້ສະທ້ອນໃຫ້ເຫັນໄດ້ຄວາມເຂົ້າໃຈທີ່ເລິກເຊິ່ງຕໍ່ຄວາມສຳຄັນຂອງຄວາມທ່ຽງທຳ ແລະສະມາຊິກຂອງກຸ່ມຮຽນຮູ້ໄດ້ມີຄວາມໝັ້ນໝາຍທີ່ຈະຜັນຂະຫຍາຍມັນອອກໄປເລື້ອຍໆ. ການສົ່ງເສີມການມີສ່ວນຮ່ວມແມ່ນການຄໍ້າປະກັນສິດທິຂອງເຂົາເຈົ້າໃນການເຂົ້າເຖິງຊັບພະຍາກອນທຳມະຊາດ. ແລະ ເມື່ອເຮົາຄໍ້າປະກັນສິດທິຂອງເຂົາເຈົ້າ ມັນກໍຈະເກີດມີຄວາມທ່ຽງທຳຕາມມາ. ໂດຍມີຄວາມທ່ຽງທຳ ແລະສິດທິແລ້ວ, ປະຊາຊົນໄດ້ຮັບຜົນປະໂຫຍດ ແລະຊັບພະຍາກອນກໍໄດ້ຮັບການປົກປັກຮັກສາ.”

# ການກວດເບິ່ງຢ່າງໃກ້ສິດກັບກຸ່ມການຮຽນຮູ້ລະດັບພາກພື້ນ




ຜ່ານມາມໍ່ໆນີ້, ແຜນງານ GREEN Mekong ໄດ້ລວບລວມເຂົ້າກັນບັນດາກິດຈະກຳຂອງກຸ່ມຮຽນຮູ້ລະດັບພາກພື້ນຢູ່ໃນເຂດແມ່ນ້ຳຂອງ. ຟິມ ວິເດໂອ ເລື່ອງນີ້ໄດ້ເວົ້າເຖິງແນວທາງປະຕິບັດຂອງພວກເຮົາເພື່ອໃຫ້ບຸລິມະສິດແກ່ການພັດທະນາຄວາມອາດສາມາດຂອງພະນັກງານຂັ້ນແຂວງ ແລະທ້ອງຖິ່ນ ເພື່ອແນ່ໃສ່ປັບປຸງໃນໄລຍະຍາວດ້ານຄວາມທ່ຽງທຳໃນການຄຸ້ມຄອງບໍລິຫານປ່າໄມ້.

ໃນຄວາມພະຍາຍາມທີ່ຈະອັດຊ້ອງຫວ່າງລະຫວ່າງຊຸມຊົນ ແລະລັດຖະບານ, ພະນັກງານປ່າໄມ້ຂັ້ນແຂວງ ແລະທ້ອງຖິ່ນຂອງບັນດາປະເທດໃນເຂດແມ່ນ້ຳຂອງຕອນລຸ່ມໄດ້ຮັບການຝຶກອົບຮົມ ແລະການຊ່ວຍເຫລືອໃນການປັບປຸງ ແລະດຳເນີນແນວທາງປະຕິບັດທີ່ມີຄວາມທ່ຽງທຳໃນການວາງນະໂຍບາຍ ແລະດຳເນີນງານດ້ານການຄຸ້ມຄອງບໍລິຫານປ່າໄມ້.

ຟິມເວດີໂອສາມາດເຂົ້າຫາໄດ້ໃນເວບໄຊນີ້: http://www.recoftc.org/project/green-mekong/videos/green-mekong-regional-learning-group



ກຸ່ມຮຽນຮູ້ລະດັບພາກພື້ນກ່ຽວກັບການຄຸ້ມຄອງບໍລິຫານປ່າໄມ້ທີ່ມີຄວາມທ່ຽງທຳໄດ້ສືບຕໍ່ຢູ່ເມືອງ ຊຽມຮຽບ, ກຳປູເຈຍ ໃນວັນທີ່ 2-7 ມີນາ 2015. ມີພະນັກງານປ່າໄມ້ອາວຸໂສຂັ້ນແຂວງຈາກບໍລິເວນພາກພື້ນໄດ້ມາປະຊຸມອີກເພື່ອການຮຽນຮູ້ຄັ້ງທີ 3. ບັນດາພະນັກງານ ຊຶ່ງເປັນຜູ້ເຂົ້າຮ່ວມການຮຽນຮູ້ໃນສອງຄັ້ງຜ່ານມາເຊັ່ນກັນ, ໄດ້ພັດທະນາຄວາມອາດສາມາດຂອງເຂົາເຈົ້າຕໍ່ໄປໃນການສຶກສາປະເມີນຜົນ ແລະການສົ່ງເສີມຄວາມທ່ຽງທຳຂັ້ນຮາກຖານ ແລະການເຂົ້າຮ່ວມກັບຊຸມຊົນທ້ອງຖິ່ນທີ່ເຂົາເຈົ້າເຮັດວຽກນຳ. ໂດຍອີງໃສ່ຂໍ້ມູນທີ່ເກັບກຳໄດ້ໃນລະ ຫວ່າງກອງປະຊຸມຮຽນຮູ້, ບັນດາຜູ້ເຂົ້າຮ່ວມໄດ້ພັດທະນາແຜນປະຕິບັດງານເພື່ອປັບປຸງຄວາມທ່ຽງທຳໃນສະພາບການຕົວຈິງຂອງເຂົາເຈົ້າ. ການຮຽນຮູ້ໄລຍະ 6 ວັນນີ້ ແມ່ນລວມທັງການລົງພາກສະໜາມຊຶ່ງເປັນບ່ອນທີ່ຜູ້ເຂົ້າຮ່ວມສາມາດເຫັນໄດ້ວ່າປ່າໄມ້ຊຸມຊົນດຳເນີນໄປຄືແນວໃດໂດຍມີການຮ່ວມມືກັບຫລາຍພາກສ່ວນທີ່ກ່ຽວຂ້ອງເພື່ອປ້ອງກັນປ່າໄມ້ໄວ້ຈາກໄພຂົ່ມຂູ່ຕ່າງໆ. ໂດຍອີງໃສ່ຄວາມຮູ້ຂອງຕົນເອງກ່ຽວກັບຄວາມທ່ຽງທຳ, ຜູ້ເຂົ້າຮ່ວມໄດ້ມີຄຳເຫັນຄືນຕໍ່ຊຸມຊົນເພື່ອສະເໜີແນະໃຫ້ປັບປຸງ ຂະບວນການຄຸ້ມຄອງຈັດສັນປ່າໄມ້ຂອງເຂົາເຈົ້າ.

ກອງປະຊຸມຮຽນຮູ້ລະດັບພາກພື້ນທີ່ຄັ້ງຕໍ່ໄປແມ່ນຈະໄດ້ຈັດຕັ້ງຂຶ້ນຢູ່ ສປປ ລາວ ໃນທ້າຍເດືອນກໍລະກົດນີ້. ກອງປະຊຸມນັ້ນຈະສ້າງໂອກາດໃຫ້ບັນດາສະມາຊິກຂອງກຸ່ມຮຽນຮູ້ເພື່ອຈະສະເໜີຕໍ່ເພື່ອນຮຽນຮູ້ນຳກັນກ່ຽວກັບຜະລິດຕະພັນຄວາມຮູ້ຂອງຕົນທີ່ສະແດງໃຫ້ເຫັນສະພາບ ແລະບັນຫາຄວາມທ່ຽງທຳທີ່ໄດ້ກຳນົດອອກ. ບັນດາຜູ້ເຂົ້າຮ່ວມຈະໄດ້ສ້າງແຜນການສື່ສານເຊັ່ນກັນເພື່ອແລກປ່ຽນການຮຽນຮູ້ຫລັກໆຈາກການເດີນທາງຂອງກຸ່ມຮຽນຮູ້ກ່ອນຈະກັບຄືນບ້ານ.



ແຜນງານ GREEN Mekong Program ໄດ້ຮັບການສະໜັບສະໜູນດ້ານທຶນຮອນຈາກອົງການ USAID ແລະ ໄດ້ຮັບການຈັດຕັ້ງປະຕິບັດໂດຍສູນ RECOFTC- ສູນສຳລັບປະຊາຊົນ ແລະປ່າໄມ້ • ກໍລະກົດ 2015

# ບັນດາຕົວແທນຈາກອົງການຈັດຕັ້ງພາກສັງຄົມ ປະຊຸມກັນ ເພື່ອຝຶກຝົນທັກສະຂອງຕົນດ້ານການ ອຳນວຍຄວາມສະດວກ

ໂດຍເປັນສ່ວນໜຶ່ງຂອງໜ້າວຽກຂອງແຜນງານ GREEN Mekong ໄລຍະ2 ປີ ແລະແຜນພັດທະນາຄວາມອາດສາມາດສຳລັບບັນດາອົງການຈັດຕັ້ງພາກ ສັງຄົມ (CSO) ທ້ອງຖິ່ນໃນທົ່ວເຂດແມ່ນ້ຳຂອງຕອນລຸ່ມ, ອົງການUSAID ແລະ RECOFTC ໄດ້ເຕົ້າໂຮມຕົວແທນຈາກ 20 ອົງການຢູ່ບາງກອກເພື່ອເຂົ້າຮ່ວມການຝຶກອົບຮົມຄັ້ງທີສາມ ໃນວັນທີ່ 23-27 ມີນາ 2015.

ຕົວແທນຂອງ ບັນດາຄູ່ຮ່ວມວຽກຂອງ ແຜນງານ GREEN Mekong ຈາກອົງການ CSO, ທີ່ເຮັດວຽກກັບຊຸມຊົນປ່າໄມ້ ໃນເຂດພື້ນແມ່ນ້ຳຂອງຕອນລຸ່ມ, ໄດ້ຈັດຕັ້ງການຝຶກອົບຮົມຈຳນວນໜຶ່ງເພື່ອເພີ້ມທະວີບົດບາດຂອງເຂົາເຈົ້າໃຫ້ເປັນຜູ້ອຳນວຍຄວາມສະດວກຢູ່ຂັ້ນຮາກຖານ. ດັ່ງທີ່ເປັນຜົນອອກມາ, ເຂົາເຈົ້າໄດ້ມີການເຂົ້າເຮັດວຽກຢ່າງມີຄວາມໝາຍ ແລະຄວາມທ່ຽງທຳຮ່ວມກັບຫລາຍໆກຸ່ມຜົນປະໂຫຍດຕ່າງໆ ພ້ອມທັງໄດ້ສ້າງເງື່ອນໄຂໃຫ້ດີຂຶ້ນສຳລັບບັນດາຜູ້ທີ່ມີສ່ວນກ່ຽວຂ້ອງທ້ອງຖິ່ນໃນການສະແດງຄວາມຄິດເຫັນ ແລະການຕັດສິນບັນຫາສຳລັບຕົນເອງກ່ຽວກັບການດຳເນີນການດ້ານປ່າໄມ້ ແລະການປ່ຽນແປງດິນຟ້າອາກາດທີ່ສົ່ງຜົນກະທົບຕໍ່ເຂົາເຈົ້າ.





ບັນດາຜູ້ເຂົ້າຮ່ວມຈາກອົງການຈັດຕັ້ງທາງສັງຄົມນຳໃຊ້ເຕັກໂນໂລຊີເພື່ອປັບປຸງທັກສະດ້ານການອຳນວຍຄວາມສະດວກຢູ່ກອງປະຊຸມທີ່ບາງກອກ, ປະເທດໄທ

ໃນໄລຍະກອງປະຊຸມ, ຜູ້ເຂົ້າຮ່ວມຈາກອົງການ CSO ໄດ້ມີໂອກາດເຊັ່ນກັນໃນການນຳໃຊ້ວິທີການຝຶກອົບຮົມຍຸກໃໝ່, ລວມທັງການບັນທຶກການນຳພາ ກອງປະຊຸມຂອງເຂົາເຈົ້າ ແລະ ໄປຄຽງຄູ່ກັບການໄດ້ຮັບການສົ່ງຂ່າວຈາກກຸ່ມດ້ວຍກັນເພື່ອປັບປຸງທັກສະຂອງຕົນ.

ບັນດາອົງການຈັດຕັ້ງ CSOs, ຊຶ່ງບາງອົງການກໍເປັນຜູ້ໄດ້ຮັບທຶນຊ່ວຍເຫລືອລ້າຂະໜາດນ້ອຍຈາກກອງທຶນ GREEN Mekong Challenge Fund (GMCF), ໄດ້ລາຍງານເຊັ່ນກັນວ່າເຂົາເຈົ້າໄດ້ນຳໃຊ້ທັກສະ ໃໝ່ຂອງເຂົາເຈົ້າແນວໃດໃນການເຄື່ອນໄຫວຜ່ານການຊ່ວຍເຫລືອລ້າ ແລະການດຳເນີນວຽກງານຕາມປົກກະຕິຂອງຕົນ.

# ຂໍ້ມູນຫລ້າສຸດຈາກກອງທຶນ GREEN Mekong Challenge Fund (GMCF)

ກອງທຶນ GMCF ໄດ້ສືບຕໍ່ສ້າງຜົນງານຫລວງຫລາຍຢູ່ທົ່ວເຂດແມ່ນ້ຳຂອງ, ລວມທັງມຽນມາແລະລາວ, ຊຶ່ງເປັນບ່ອນທີ່ສອງອົງການຮັບທຶນຈາກກອງທຶນຄື: ມູນນິທິພັດທະນາ METTA ແລະສະມາຄົມຊີວະນາໆພັນ (LBA), ໄດ້ສ້າງຄວາມຄືບໜ້າຢູ່ຂັ້ນຮາກຖານໃນແຕ່ລະບ່ອນ. ກອງທຶນ GMCF ໄດ້ຕັ້ງແນວຄິດໄວ້ໃນເບື້ອງຕົ້ນແມ່ນເພື່ອສະໜັບສະໜູນຜູ້ເຂົ້າຮ່ວມຈາກອົງການຈັດຕັ້ງ CSO ໃນການຈັດຕັ້ງປະຕິບັດແຜນປະຕິບັດງານທີ່ສ້າງຂຶ້ນໃນໄລຍະການເປີດການຝຶກອົບຮົມຄັ້ງທຳອິດ; ແຕ່ນັ້ນມາກໍໄດ້ສະແດງໃຫ້ເຫັນວ່າເຂົາເຈົ້າມີຄວາມສາມາດຢ່າງເຕັມປ່ຽມ, ທັງເກີດມີຫົວຄິດປະດິດສ້າງ ແລະວິທີການໃໝ່ໃນໝູ່ອົງການທີ່ໄດ້ຮັບທຶນ ແລະສ້າງໂອກາດໃຫ້ບັນດາອົງການຈັດຕັ້ງ CSO ໄດ້ນຳໃຊ້ການຝຶກອົບຮົມດ້ານຄວາມທ່ຽງທຳໃຫ້ເກີດປະໂຫຍດ.

ໃນຂະນະທີ່ໂຄງການຂອງ METTA ຈະໄດ້ສືບຕໍ່ ຈົນເຖິງເດືອນ ສິງຫາ 2015, ໃນຊ້ວງສາມເດືອນທຳອິດ, ເມສາ ເຖິງ ມິຖຸນາ, ດ້ານສ້າງຄວາມອາດສາມາດດ້ານຄວາມທ່ຽງທຳໃຫ້ແກ່ບັນດາອົງການຈັດຕັ້ງຂອງຊຸມຊົນແມ່ນໄດ້ມີໝາກຜົນຫລາຍ, ກວມເອົາ 10 ບ້ານ ແລະໃຫ້ຜົນປະໂຫຍດຕໍ່ 1,826 ຄົວເຮືອນ. ກອງປະຊຸມແມ່ນໄດ້ອອກແບບມາເພື່ອເສີມສ້າງຄວາມອາດສາມາດຂອງອົງການຈັດຕັ້ງຂອງຊຸມຊົນ (CBO) ແລະຄະນະກຳມະການຄຸ້ມຄອງຈັດສັນຊັບພະຍາກອນປ່າໄມ້ແຄມທະເລ ເພື່ອປັບປຸງການນຳພາ ແລະທັກສະດ້ານການຈັດຕັ້ງ, ຄວາມຮູ້ດ້ານຄວາມທ່ຽງທຳ, ການຄຸ້ມຄອງບໍລິຫານ ແລະການຈັດການທີ່ດີ, ແນ່ໃສ່ຮັບປະກັນການເຂົ້າຮ່ວມທີ່ມີຄວາມໝາຍກັບຊຸມຊົນທີ່ເຮັດກັບປ່າໄມ້ແຄມທະເລ.







ພະນັກງານຂອງມູນນິທິ METTA ໄດ້ໄປຢ້ຽມຢາມບ້ານເປົ້າໝາຍ 10 ບ້ານ ແລະໄດ້ພົບກັບບັນດາຜູ້ນຳບ້ານ ແລະສະມາຊິກຂອງ MRMCເພື່ອແລກປ່ຽນ ແລະສົ່ງເສີມແນວຄວາມຄິດ ແລະຂະບວນການຂອງການຄຸ້ມຄອງຈັດສັນປ່າໄມ້ຕາມແຄມທະເລ

ນອກຈາກການສ້າງຄວາມອາດສາມາດດ້ານການຄຸ້ມຄອງບໍລິຫານທີ່ມີຄວາມທ່ຽງທຳແລ້ວ, ຂະບວນການຈັດກອງປະຊຸມປຶກສາຫາລືຂອງມູນນິທິ METTA ກໍມີຄວາມທ່ຽງທຳໃນຕົວຂອງຕົນເອງ, ທີ່ມີການຮ່ວມມືກັບບັນດາບ້ານເພື່ອຮັບປະກັນການເອົາແມ່ຍິງ ແລະຊາວຫາປາຂະໜາດນ້ອຍທີ່ອາໄສປ່າໄມ້ແຄມທະເລເປັນຕົ້ນຕໍເພື່ອດຳລົງຊີວິດ. ໃນໄລຍະທີ່ມີຂະບວນການຈັດກອງປະຊຸມໄດ້ດຳເນີນໄປຢູ່ນັ້ນ, ບັນດາຜູ້ເຂົ້າຮ່ວມກໍສາມາດປະກອບສ່ວນໃສ່ ແລະມີສາຍພົວພັນກັບຊັບພະຍາກອນທຳມະຊາດ. ສິ່ງນີ້ໄດ້ພາໃຫ້ເກີດມີຄວາມເຂົ້າໃຈກັນດີຂຶ້ນລະຫວ່າງບັນດາກຸ່ມຜູ້ທີ່ມີສ່ວນກ່ຽວຂ້ອງ ແລະມີຄວາມເຂົ້າໃຈວ່າເປັນຫຍັງການເຂົ້າຮ່ວມແຕ່ລະເທື່ອຈຶ່ງມີ

*ຄວາມສຳຄັນ. ທ່ານ ອູຕິນກວາຍ ຈາກບ້ານ ປາ, ໄດ້ເວົ້າວ່າ: "ພວກເຮົາຈຳເປັນຕ້ອງອະນຸລັກປ່າໄມ້ແຄມທະເລທຳມະຊາດຢ່າງເປັນລະບົບໂດຍການປະກອບສ່ວນຂອງຊຸມຊົນຖ້າພວກເຮົາບໍ່ອະນຸລັກປ່າໄມ້ແຄມທະເລທີ່ມີຢູ່ນີ້, ຊາວກະສິກອນທີ່ຢູ່ໃກ້ປ່າໄມ້ແຄມທະເລຈະໄດ້ຮັບຜົນກະທົບຢ່າງຮ້າຍກວ່າພວກອື່ນ."*

ໃນ ສປປ ລາວ, ວຽກຂອງສະມາຄົມຊີວະນາໆພັນພາຍໃຕ້ກອງທຶນ GMCF ໄດ້ສຸມໃສ່ການຈັດຝຶກອົບໃຫ້ຄູຝຶກ. ເປົ້າໝາຍໃຫຍ່ໆຂອງເຂົ້າເຈົ້າແມ່ນພະນັກງານລັດທ້ອງຖິ່ນ ຜູ້ທີ່ປະສົມປະສານ ແລະເຮັດວຽກກັບຊຸມຊົນໃນການຄຸ້ມຄອງຈັດສັນຊັບພະຍາກອນປ່າໄມ້ຢູ່ອ້ອມແອ້ມບໍລິເວນເຂດປາສະຫງວນພູທາຊັງໃນແຂວງຜົ້ງສາລີ.



ພະນັກງານປ່າໄມ້ແມ່ຍິງຂັ້ນແຂວງເຂົ້າຮ່ວມໃນການຝຶກອົບຮົມກ່ຽວກັບຄວາມທ່ຽງທຳທີ່ສະມາຄົມ LBA ຈັດຂຶ້ນ

ພະນັກງານຂອງຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ແລະຫ້ອງການຍຸຕິທຳເມືອງຊາວຄົນ ໄດ້ຮຽນຮູ້ກ່ຽວກັບແນວຄວາມຄິດ ແລະຫລັກການຂອງຄວາມທ່ຽງທຳໃນການຄຸ້ມຄອງບໍລິຫານປ່າໄມ້ ແລະໄດ້ຝຶກອົບຮົມກ່ຽວກັບການປັບປຸງການເຂົ້າຮ່ວມຂອງຊຸມຊົນທ້ອງຖິ່ນ ເພື່ອເພີ້ມທະວີຈິດສຳນຶກຕໍ່ກັບກົດໝາຍທີ່ກ່ຽວຂ້ອງ ແລະປັບປຸງການເຈລະຈາ ແລະການຕຳນິສົ່ງຂ່າວກ່ຽວກັບບັນຫາດ້ານປ່າໄມ້ຢູ່ທ້ອງຖິ່ນ..

# ຊັບພະກອນດ້ານຄວາມທ່ຽງທຳ

## ຂໍ້ມູນແບບກຣາຟິກ: ປ່າໄມ້ສັງຄົມ ແລະການປ່ຽນແປນດິນຟ້າອາກາດ ໃນ ເຂດ ອາຊຽນ




ບົດລາຍງານຂອງ ອົງການ RECOFTC “ສະຖານະພາບປະຈຸບັນຂອງປ່າໄມ້ສັງຄົມ ໃນການຫລຸດຜ່ອນ ແລະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນເຂດອາຊຽນ”ສະແດງໃຫ້ເຫັນຂໍ້ມູນກ່ຽວກັບຄວາມປົກຫຸ້ມຂອງປ່າໄມ້ ແລະພື້ນທີ່ໆໄດ້ມີການຄຸ້ມຄອງຈັດສັນໂດຍປະຊາຊົນທ້ອງຖິ່ນ ສຳລັບແປດປະເທດ ອາຊຽນ (ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ໄທ ແລະຫວຽດນາມ) ຂໍ້ມູນແບບກຣາຟິກນີ້ ບອກໃຫ້ຮູ້ວ່າມີຫຍັງແດ່ທີ່ໄດ້ສະເໜີຢູ່ໃນບົດລາຍງານ, ສາມາດເຂົ້າຫາໄດ້ໃນເວບໄຊ http://www.recoftc.org/project/asfcc/q-and/infographic-social-forestry-and-climate-change-asean

## ການພັດທະນາຄວາມອາດສາມາດ: ເຂົ້າຫາຈຸດສົນໃຈຢູ່ໃນຍຸກດິນຟ້າອາກາດໃໝ່?



ໃນເດືອນມິຖຸນາ, ຢູ່ກອງປະຊຸມຄັ້ງທີ 42 ຂອງກຳມະການ SBSTA ເມືອງບອນ, ປະເທດເຍຍລະມັນ, ທ່ານ ນ. Regan Suzuki Pairojmahakij ຂອງອົງການ RECOFTC ໄດ້ເວົ້າກ່ຽວກັບການ ສ້າງຄວາມອາດສາມາດສຳລັບຄວາມທ່ຽງທຳໃນການຄຸ້ມຄອງບໍລິຫານປ່າໄມ້ ແລະຄວາມຄັບສຳລັບນະໂຍບາຍ. ຍ້ອນວ່າໄດ້ຮັບການກະຕຸ້ນຈາກຂໍ້ມູນ ແລະໝາກຜົນຂອງແຜນງານ GREEN Mekong ມາເຖິງປະຈຸບັນ, ນາງໄດ້ເລີ້ມອະທິບາຍດ້ານ ຄວາມທ່ຽງທຳ ວ່າບໍ່ແມ່ນ “ຂະໜາດດຽວໃຊ້ໄດ້ກັບໝົດທຸກຢ່າງ”, ແຕ່ມັນຂຶ້ນກັບສະພາບການ, ພາສາ, ບຸລິມະສິດ ແລະຄວາມຕ້ອງການຂອງປະເທດ. ທ່ານໄດ້ສືບຕໍ່ອະທິບາຍວ່າ ເພື່ອໃຫ້ວຽກງານ ເຣດ+ ມີຄວາມຍືນຍົງ, ການຮັບປະກັນໃຫ້ມີຄວາມທ່ຽງທຳແມ່ນມີຄວາມສຳຄັນ, ແລະການສ້າງຄວາມອາດສາມາດແມ່ນຍຸດທະສາດຫລັກ ຖ້າຈະບັນລຸໄດ້ຄຳຕອບທີ່ມີປະສິດທິຜົນ ແລະຄວາມທ່ຽງທຳຕໍ່ການປ່ຽນແປງດິນຟ້າອາກາດ.

ການສະເໜີຂອງ ທ່ານ ນ Regan ໄດ້ກວມເອົາຄວາມສຳຄັນຂອງການພັດທະນາຄວາມອາດສາມາດ ສຳລັບການຕອບໂຕະທີ່ມີຄວາມທ່ຽງທຳຕໍ່ກັບການປ່ຽນແປງດິນຟ້າອາກາດ, ສາມາດເຂົ້າຫາໄດ້ທີ່ເວບໄຊ: http://bit.ly/1emgxdi

## ສ້າງກໍລະນີສຳລັບຄວາມທ່ຽງທຳ: ຄວາມຍຸຕິທຳທີ່ຄຶດເຫັນ ສົມທຽບກັບຄວາມທ່ຽງທຳທາງສັງຄົມໃນລະບົບການແຈກຢາຍຜົນປະໂຫຍດພາຍໃຕ້ REDD+

ການແບ່ງປັນຊັບພະຍາກອນໃໝ່ຕາມຄວາມທ່ຽງທຳແມ່ນສ່ວນປະກອບໜຶ່ງທີ່ສຳຄັນຂອງພາລະໜ້າທີ່ຂອງແຜນງານ GREEN Mekong, ທີ່ດຶງຄວາມສົນໃຈມາຫາຜະລິດຕະພັນຄວາມຮູ້ຊຶ່ງເປັນພື້ນຖານຂອງວຽກຂອງແຜນງານ GREEN Mekong. ວາລະສານສະບັບນີ້ແມ່ນທົບທວນຄືນບັນດາກົນໄກທີ່ເປັນໄປໄດ້ຢູ່ພາຍໃນແຜນງານ ເຣດ+ແຫ່ງຊາດ, ແລະມັນກໍ່ຂຶ້ນກັບວ່າການທຳລາຍປ່າໄມ້ສ່ວນຫລາຍແມ່ນຖືກດຳເນີນໄປໂດຍຊຸມຊົນແລະຊາວກະສິກອນທີ່ຮັ່ງມີກວ່າ ຫລືທຸກຍາກກວ່າ, ຜົນຕາມມາທີ່ແຕກຕ່າງກັນໃນແງ່ຂອງຄວາມທ່ຽງທຳດ້ານສັງຄົມຢູ່ໃນວຽກເຣດ+. ມັນສະແດງອອກໃຫ້ເຫັນເຊັ່ນກັນວ່າກົນໄກທີ່ຜູ້ເຂົ້າຮ່ວມຄຳນຶງເຫັນເປັນສ່ວນຫລາຍວ່າມີຄວາມທ່ຽງທຳນັ້ນບໍ່ຈຳເປັນວ່າຈະເປັນອັນດຽວກັນກັບສິ່ງທີ່ພາໃຫ້ເກີດມີຄວາມທ່ຽງທຳດ້ານສັງຄົມສູງສຸດ.

ມີຢູ່ທີ່ເວບໄຊ: http://www.revista.inecc.gob.mx/article/view/223/219#.VZMfGvmqpBc

---

# ແວ່ນຊ່ອງດ້ານບົດບາດຍິງຊາຍ

## ບັນດາກໍລະນີສຶກສາຈາກທົ່ວໂລກສະແດງໃຫ້ເຫັນວ່າການຄົ້ນຄວ້າດ້ານບົດບາດຍິງຊາຍແບບມີສ່ວນຮ່ວມແມ່ນເສັ້ນທາງທີ່ຈະຕ້ອງເດີນ.

ນັກຄົ້ນຄວ້າດ້ານບົດບາດຍິງຊາຍຂອງອົງການຊີວະນາໆພັນສາກົນໄດ້ສົນທະນາກ່ຽວກັບຜົນສຳເລັດຂອງເຂົາເຈົ້າໂດຍນຳໃຊ້ເຄື່ອງມື ແລະຂະບວນການຄົ້ນຄວ້າແບບມີສ່ວນຮ່ວມໃນບັນດາໂຄງການຄົ້ນຄວ້າທີ່ແຕກຕ່າງກັນໃນ ເບີກີນາຟາໂຊ, ການາຣູນ, ອິນເດຍ ແລະມາເລເຊຍ.

ອ່ານເພີ້ມເຕີມໃນເວໄຊ http://www.bioversityinternational.org/news/detail/case-studies-from-around-the-globe-show-that-gender-responsive-participatory-research-is-the-way-to-go/

## ການເສື່ອມສານບົດບາດຍິງຊາຍເຂົ້າໃນນະໂຍບາຍປ່າໄມ້ຢູ່ພາກພື້ນເອເຊຍ ແລະ ປາຊີຟິກ.

ບົດລາຍງານສະບັບນີ້ສຸມໃສ່ທັດສະນະດ້ານວິທີການເສື່ອມໂຍງບົດບາດຍິງຊາຍເຂົ້າໃນນະໂຍບາຍປ່າໄມ້ຢູ່ໃນແປດປະເທດຂອງພາກພື້ນເອເຊຍ-ປາຊີຟິກ (ເນປານ, ສີລັງກາ, ກຳປູເຈຍ, ຟີຈີ, ອິນໂດເນເຊຍ, ຟີລິບປິນ, ໄທ ແລະຫວຽດນາມ). ຕາມມາໂດຍຄຳຊີ້ແຈງນະໂຍບາຍທີ່ຍົກໃຫ້ເຫັນສິ່ງທ້າທາຍສຳລັບແມ່ຍິງ ແລະໃຫ້ຄຳສະ ເໜີແນະເພື່ອສົ່ງເສີມການເຊື່ອມສານບົດບາດຍິງຊາຍເຂົ້າໃນວຽກງານປ່າໄມ້.

ເຂົ້າເບິ່ງໄດ້ໃນ http://www.recoftc.org/reports/mainstreaming-gender-forest-policies-asia-and-pacific

:


**ແຜນງານ** GREEN Mekong
ຂອງສູນ RECOFTC –ສູນສຳລັບປະຊາຊົນ ແລະປ່າໄມ້:
P.O. Box 1111 Kasetsart Post Office
Bangkok 10903, Thailand
green.mekong@recoftc.org
www.recoftc.org/site/about-green-mekong



ຄຳເຫັນຕ່າງໆທີ່ໄດ້ສະເໜີຢູ່ໃນເອກະສານນີ້ ບໍ່ຈຳເປັນວ່າຈະສະທ້ອນເຖິງສູນ RECOFTC- ສູນສຳລັບປະຊາຊົນ ແລະ ປ່າໄມ້ ແລະ ຂອງອົງການ USAID.
ພວກເຮົາບໍ່ຮັບຜິດຊອບຕໍ່ຄວາມຜິດພາດ ຫລື ການແປບໍ່ໝົດ ໃນການແປເອກະສານນີ້ ຈາກສະບັບເດີມໄປເປັນພາສາອື່ນໆ..


ພວກເຮົາເຊື້ອເຊີນທ່ານ ແລກປ່ຽນຄວາມຄິດຄວາມເຫັນສົ່ງຂ່າວກັບຄືນຂອງທ່ານກ່ຽວກັບວາລະສານສະບັບນີ້ ຫລື ປະກອບສ່ວນໃສ່ວາລະສານກ່ຽວກັບຜົນສຳເລັດ ຫລື ວຽກງານດ້ານຄວາມທ່ຽງທຳຂອງທ່ານ. ສົ່ງ Email ຫາພວກເຮົາທີ່:green.mekong@recoftc.org


ແຜນງານ GREEN Mekong Program ໄດ້ຮັບການສະໜັບສະໜູນດ້ານທຶນຮອນຈາກອົງການ USAID ແລະ ໄດ້ຮັບການຈັດຕັ້ງປະຕິບັດໂດຍສູນ RECOFTC- ສູນສຳລັບປະຊາຊົນ ແລະປ່າໄມ້ • ກໍລະກົດ 2015